Washington State Department of Social & Health Services
Transforming lives

ອົງການຄົນພິການທາງດ້ານພັດທະນາການ (DEVELOPMENTAL DISABILITIES ADMINISTRATION (DDA))

# ແຈ້ງການການໝົດອາຍຸການມີສິດໄດ້ຮັບຕອນອາຍຸສີ່ (4) ປີ

ວັນທີ:

ຊື່ ແລະ ທີ່ຢູ່ລູກຄ້າ

ຊື່ ແລະ ທີ່ຢູ່ຜູ້ຕາງໜ້າ

ເລື່ອງ: **ແຈ້ງການການການໝົດອາຍຸການມີສິດໄດ້ຮັບຕອນອາຍຸສີ່ (4) ປີ**

ລູກຂອງທ່ານເປັນລູກຄ້າກັບອົງການຄົນພິການທາງດ້ານພັດທະນາການ (DDA) ຢູ່ໃນປັດຈຸບັນ. ການມີສິດຢູ່ກັບ DDA ຂອງລູກທ່ານໝົດອາຍຸໃນວັນເກີດຄົບຮອບສີ່ປີຂອງລາວ/ນາງ. ເພື່ອໃຫ້ລູກຂອງທ່ານຍັງຄົງມີສິດຢູ່ໃນ DDA, ທ່ານຕ້ອງສະໝັກຂໍຄືນໃໝ່ກ່ອນລູກທ່ານມີອາຍຸຮອດສີ່ປີ. ລູກຂອງທ່ານຕ້ອງໄດ້ຮັບການກໍານົດການມີສິດໄດ້ຮັບຄືນໃໝ່ພາຍໃຕ້ໜຶ່ງໃນເງື່ອນໄຂຕໍ່ໄປນີ້: ຄວາມພິການທາງປັນຍາ, ຄວາມພິການທາງສະໝອງ, ພະຍາດບ້າໝູ, ປັນຍາອ່ອນ, ສະພາບທາງປະສາດ ຫຼື ສະພາບອື່ນໆຄ້າຍຄືກັບຄວາມພິການທາງປັນຍາ.

ພວກເຮົາໄດ້ຄັດຕິດຕາຕະລາງເອກະສານທີ່ຕ້ອງການມານໍາເພື່ອໃຫ້ທ່ານຮູ້ສິ່ງທີ່ຈໍາເປັນເພື່ອເຮັດການກໍານົດອັນນີ້ຄືນໃໝ່.

## ຂ້ອຍສະໝັກໄດ້ແນວໃດ?

ຕິດຕໍ່ພະນັກງານຮັບເຂົ້າ ແລະ ການມີສິດໄດ້ຮັບຂອງ DDA ຢ່າງໜ້ອຍ 90 ວັນກ່ອນຈະຮອດວັນເກີດຄົບຮອບສີ່ປີຂອງລູກທ່ານເພື່ອຂໍຊອງເອກະສານການສະໝັກຄືນໃໝ່. ທ່ານສາມາດເຮັດອັນນີ້ໄດ້ໂດຍການຂຽນໜັງສືຫາ ຫຼື ໂດຍການໂທຫາເບີທີ່ມີຢູ່ລຸ່ມນີ້. ຈະສົ່ງຊອງໃບສະໝັກໃຫ້ທ່ານໂດຍທາງໄປສະນີ. ນອກນັ້ນທ່ານຍັງອາດຈະເອົາເອກະສານທາງອອນລາຍໄດ້ໂດຍການເຂົ້າໄປ https://www.dshs.wa.gov/dda/consumers-and-families/eligibility.

## ຈະເກີດຫຍັງຂຶ້ນຖ້າຂ້ອຍບໍ່ສະໝັກຄືນໃໝ່?

ຖ້າທ່ານບໍ່ຂໍຊອງການສະໝັກຄືນໃໝ່ ຫຼື ຖ້າທ່ານບໍ່ສົ່ງໃບສະໝັກຄືນຢ່າງໜ້ອຍ 60 ວັນກ່ອນຮອດວັນເກີດຂອງລູກທ່ານ, ການມີສິດໄດ້ຮັບກັບ DDA ຈະໝົດອາຍຸໃນວັນເກີດຄົບຮອບສີ່ປີຂອງລາວ/ນາງ. ຖ້າລູກຂອງທ່ານໄດ້ຮັບການບໍລິການທີ່ຈ່າຍເງິນແລ້ວກັບ DDA, ການບໍລິການນີ້ຈະສິ້ນສຸດໃນວັນເກີດຄົບຮອບສີ່ປີຂອງລາວ/ນາງ.

**ການໝົດອາຍຸການມີສິດໄດ້ຮັບ DDA ຈະບໍ່ມີຜົນກະທົບຕໍ່ການເຂົ້າຮ່ວມໃນໂຄງການສຶກສາພິເສດ ຫຼື ການມີສິດໄດ້ຮັບ SSI. ມັນຈະບໍ່ມີຜົນກະທົບຕໍ່ການບໍລິການອື່ນຂອງ DSHS ທີ່ທ່ານອາດຈະກໍາລັງໄດ້ຮັບຢູ່ເຊັ່ນ: Medicaid, TANF ຫຼື ບັດອາຫານ (food stamps).**

ກະລຸນາຕອບຄືນທັນທີທີ່ເປັນໄປໄດ້, ແຕ່ຢ່າງໜ້ອຍ 90 ວັນກ່ອນຮອດວັນເກີດຄົບຮອບສີ່ປີຂອງລູກຂອງທ່ານ. ຖ້າພວກເຮົາບໍ່ໄດ້ຍິນອັນໃດຈາກທ່ານ, ພວກເຮົາຈະຖືວ່າທ່ານບໍ່ຕ້ອງການສືບຕໍ່ການມີສິດກັບ DDA ຂອງລູກຂອງທ່ານ. ໂດຍບໍ່ມີເອກະສານເງື່ອນໄຂການມີສິດໄດ້ຮັບທີ່ຖືກຕ້ອງໃນຕອນອາຍຸສີ່ (4) ປີ ການມີສິດໄດ້ຮັບ DDA ຂອງລູກທ່ານ ແລະ ການບໍລິການຂອງ DDA ຈະໝົດອາຍຸໃນວັນເກີດຄົບຮອບສີ່ (4) ປີຂອງລາວ/ນາງ.

ຖ້າທ່ານມີຄໍາຖາມ ຫຼື ຢາກຈະຂໍຊອງເອກະສານ, ກະລຸນາຕິດຕໍ່

| ຊື່ | ເບີໂທລະສັບ | ທີ່ຢູ່ອີເມວ |
| --- | --- | --- |

ສໍາເນົາກົດລະບຽບຂອງລັດທີ່ຄຸ້ມຄອງການມີສິດໄດ້ຮັບແມ່ນມີໃຫ້ຕາມການສະເໜີຂໍ ຫຼື ທາງອອນລາຍທີ່ https://www.dshs.wa.gov/dda/consumers-and-families/eligibility.

ບ່ອນສົ່ງ: ສໍານວນລູກຄ້າ

## ຕາຕະລາງສະແດງເອກະສານທີ່ຕ້ອງການ

| ສະພາບຄວາມພິການ | ອາຍຸ | ບົ່ງມະຕິພະຍາດ | ແພດບົ່ງມະຕິພະຍາດ | ບັນທຶກອື່ນໆ |
|---|---|---|---|---|
| ພັດທະນາການຊັກຊ້າ | ອາຍຸ 4 ຫາ 9 ປີ | ພັດທະນາການຊັກຊ້າ | ແພດຜູ້ຊ່ຽວຊານມີຄຸນສົມບັດທີ່ຈະດຳເນີການປະເມີນ ຫຼື ປະເມີນຜົນທາງພັດທະນາການ | ອາຍຸສີ່ (4) ຫາ ເກົ້າ (9) ປີ – ມີຄວາມຊັກຊ້າສາມອັນ ຫຼື ຫຼາຍກວ່າຂອງຄວາມບ່ຽງເບນມາດຕະຖານ 1.5 ຕ່ຳ ກວ່າຄ່າສະເລ່ຍ ຫຼື 25 % ຂອງອາຍຸຊຳເຮື້ອອີງຕາມການປະເມີນປັດຈຸບັນພາຍ ໃນ 12 ເດືອນຜ່ານມາ. |
| ຄວາມພິການທາງປັນຍາ | ອາຍຸ 4 ປີຂຶ້ນໄປ | ຄວາມພິການທາງປັນຍາ | ຈິດຕະແພດທີ່ມີໃບອະນຸຍາດ, ຈິດຕະແພດຂອງໂຮງຮຽນທີ່ລັດວໍຊິງຕັນຮັບຮອງ ຫຼື ຈິດຕະແພດໂຮງຮຽນອື່ນໆທີ່ຮັບຮອງໂດຍສະມາຄົມຈິດຕະແພດໂຮງແຮຽນແຫ່ງຊາດ | ບົດລາຍງານທາງຈິດຕະສາດສະບັບເຕັມ ລວມທັງຄະແນນ IQ ເຕັມຂີດຂອງຄວາມບ່ຽງເບນມາດຕະຖານຫຼາຍກວ່າສອງອັນຕ່ຳກວ່າຄ່າສະເລ່ຍ ແລະ ຄະແນນການທົດສອບທັກສະການປັບຕົວຂອງຄວາມບ່ຽງເບນມາດຕະຖານຫຼາຍກວ່າສອງອັນຕ່ຳກວ່າຄ່າສະເລ່ຍທີ່ໄດ້ເຮັດສຳເລັດພາຍໃນ 36 ເດືອນຜ່ານມາ. |
| ຄວາມພິການທາງສະໝອງ | ອາຍຸ 4 ປີຂຶ້ນໄປ | ຄວາມພິການທາງສະໝອງ<br>ອຳມະພາດແຂນຂາ<br>ອຳມະພາດເຄິ່ງໂຕ<br>ອຳມະພາດສອງດ້ານ | ແພດທີ່ມີໃບອະນຸຍາດ | ການເລີ່ມຕົ້ນກ່ອນຮອດອາຍຸສາມ (3) ປີ ແລະ ຂໍ້ມູນສະໜັບສະໜູນຄວາມຕ້ອງການສຳລັບການຊ່ວຍເຫຼືອທາງດ້ານຮ່າງກາຍໂດຍກົງໃນແຕ່ລະວັນໃນສອງຢ່າງຂຶ້ນໄປ (ການເຂົ້າຫ້ອງນ້□າ, ການອາບນ້ຳ, ການກິນ, ການນຸ່ງເຄື່ອງ, ການເຄື່ອນໄຫວໄປມາ ຫຼື ການສື່ສານ). |
| ພະຍາດບ້າໝູ | ອາຍຸ 4 ປີຂຶ້ນໄປ | ພະຍາດບ້າໝູ ຫຼື ຄວາມຜິດປົກກະຕິຂອງການຊັກ | ຊ່ຽວຊານລະບົບປະສາດທີ່ຄະນະກຳມະການຮັບຮອງ | ການບົ່ງມະຕິພະຍາດຕາມປະຫວັດທາງການແພດ ແລະ ການກວດທາງດ້ານລະບົບປະສາດ, ການຢືນຢັນຈາກແພດ ຫຼື ຊ່ຽວຊານລະບົບປະສາດຂອງອາການຊັກທີ່ຄວບຄຸມບໍ່ໄດ້ ແລະ ຍັງເກີດຂຶ້ນຢູ່ ຫຼື ເກີດຂຶ້ນມາອີກ ແລະ ການທົດສອບທັກສະທາງດ້ານການປັບຕົວສະແດງໃຫ້ເຫັນມີການຈຳກັດຫຼາຍໃນການເຮັດໜ້າທີ່ການປັບຕົວຂອງຄວາມບ່ຽງເບນມາດຕະຖານຫຼາຍກວ່າສອງອັນຢູ່ຕ່ຳກວ່າຄ່າສະເລ່ຍ. |
| ປັນຍາອ່ອນ<br>(ຕໍ່ DSM-IV-TR) | ອາຍຸ 4 ປີຂຶ້ນໄປ | ປັນຍາອ່ອນ ຫຼື ຄວາມຜິດປົກກະຕິທາງດ້ານປັນຍາ ຕໍ່ 299.00 ໃນ DSM-IV-TR | ຜູ້ຊ່ຽວຊານຈິດຕະສາດທີ່ມີໃບອະນຸຍາດ, ແພດທີ່ມີໃບອະນຸຍາດ ຫຼື ARNP ກ່ຽວຂ້ອງກັບສູນປັນຍາອ່ອນ, ສູນພັດທະນາການ ຫຼື ສູນຂອງຄວາມສະຫຼາດ ຫຼື ຄະນະກຳມະການຮັບຮອງເຊັ່ນ: ຊ່ຽວຊານປະສາດ, ຈິດຕະແພດ ຫຼື ແພດຊ່ຽວຊານທາງດ້ານພັດທະນາການ ແລະ ພຶດຕິກຳເດັກ | ການປະເມີນຜົນເຕັມຕາມ DSM-IV-TR ທີ່ໄດ້ຕາມທຸກມາດຖານການບົ່ງມະຕິພະຍາດ, ຫຼັກຖານຂອງການເຮັດໜ້າທີ່ ການຊັກຊ້າ ຫຼື ຜິດປົກກະຕິກ່ອນຮອດອາຍຸສາມ (3) ປີຢູ່ໃນທັກສະທາງດ້ານສັງຄົມ, ພາສາ, ການສື່ສານ ຫຼື ການຫຼິ້ນຕາມສັນຍາລັກ ຫຼື ຈິນຕະນາການ ແລະ ການທົດສອບທັກສະທາງດ້ານການປັບຕົວສະແດງໃຫ້ເຫັນມີການຈຳກັດຫຼາຍໃນການເຮັດໜ້າທີ່ການປັບຕົວຂອງຄວາມບ່ຽງເບນມາດຕະຖານຫຼາຍກວ່າສອງອັນຢູ່ຕ່ຳກວ່າ ຄ່າສະເລ່ຍ. |
| ລະດັບຂອງຄວາມຜິດປົກກະຕິທາງປັນຍາ<br>(ຕໍ່ DSM-5) | ອາຍຸ 4 ປີຂຶ້ນໄປ | ລະດັບຂອງຄວາມຜິດປົກກະຕິທາງປັນຍາ 299.00 ຕໍ່ DSM-5 ລວມທັງລະດັບຄວາມຮຸນແຮງ 2 ຫຼື 3 ໃນທັງສອງຖັນ | ຜູ້ຊ່ຽວຊານຈິດຕະສາດທີ່ມີໃບອະນຸຍາດ, ແພດທີ່ມີໃບອະນຸຍາດ ຫຼື ARNP ກ່ຽວຂ້ອງກັບສູນປັນຍາອ່ອນ, ສູນພັດທະນາການ ຫຼື ສູນຂອງຄວາມສະຫຼາດ ຫຼື ຄະນະກຳມະການຮັບຮອງເຊັ່ນ: ຊ່ຽວຊານປະສາດ, ຈິດຕະແພດ ຫຼື ແພດຊ່ຽວຊານທາງດ້ານພັດທະນາການ ແລະ ພຶດຕິກຳເດັກ | ການປະເມີນຜົນເຕັມຕາມ DSM-IV-TR ທີ່ໄດ້ຕາມທຸກມາດຖານການບົ່ງມະຕິພະຍາດ, ຫຼັກຖານຂອງການເຮັດໜ້າທີ່ ການຊັກຊ້າ ຫຼື ຜິດປົກກະຕິກ່ອນຮອດອາຍຸສາມ (3) ປີກັບລະດັບຄວາມຮຸນແຮງ ຂອງສອງ ຫຼື ສາມໃນທັງສອງຖັນຂອງຂະໜາດວັດແທກຄວາມຮຸນແຮງ, ການທົດ ສອບທັກສະທາງດ້ານການປັບຕົວສະແດງໃຫ້ເຫັນມີການຈຳກັດຫຼາຍໃນການເຮັດໜ້າທີ່ການປັບຕົວຂອງຄວາມບ່ຽງເບນມາດຕະຖານຫຼາຍກວ່າສອງອັນ ແລະ FSIQ ຂອງຄວາມບ່ຽງເບນມາດຕະຖານອັນໜຶ່ງ ຫຼື ຫຼາຍອັນຢູ່ຕ່ຳກວ່າ ຄ່າສະເລ່ຍ – ຫຼື – ໄດ້ຕາມທຸກມາດຖານສຳລັບຄວາມຜິດ ປົກກະຕິ ທາງປັນຍາ 299.00 ຕໍ່ DSM-IV. |

## ຕາຕະລາງສະແດງເອກະສານທີ່ຕ້ອງການ

| ສະພາບຄວາມພິການ | ອາຍຸ | ບົ່ງມະຕິພະຍາດ | ແພດບົ່ງມະຕິພະຍາດ | ບັນທຶກອື່ນໆ |
|---|---|---|---|---|
| ສະພາບທາງດ້ານລະບົບປະສາດອື່ນ ຫຼື ສະພາບອື່ນໆຄ້າຍຄືກັບຄວາມພິການທາງປັນຍາ | ອາຍຸ 4 ປີຂຶ້ນໄປ | ຄວາມຜິດປົກກະຕິທາງດ້ານລະບົບປະສາດ ຫຼື ໂຄຣໂມໂຊມທີ່ຮູ້ຈັກວ່າເປັນສາເຫດຄວາມຂາດແຄນທາງດ້ານທັກສະທາງປັນຍາ ແລະ ທາງດ້ານການປັບຕົວ | ແພດທີ່ມີໃບອະນຸຍາດ | ຄະແນນ IQ ເຕັມຂີດຂອງຄວາມບ່ຽງເບນມາດຕະຖານຫຼາຍກວ່າ 1.5 ຕໍ່າກວ່າຄ່າສະເລ່ຍ ແລະ ການທົດສອບທັກສະການປັບຕົວສະແດງໃຫ້ເຫັນການຈໍາກັດຫຼາຍໃນການເຮັດໜ້າທີ່ການປັບຕົວຂອງຂອງຄວາມບ່ຽງເບນມາດຕະຖານຫຼາຍກວ່າສອງອັນຕໍ່າກວ່າຄ່າສະເລ່ຍທີ່ໄດ້ເຮັດສໍາເລັດພາຍໃນ 36 ເດືອນຜ່ານມາ. |

**ໝາຍເຫດ:** **ແບບຟອມນີ້ເປັນຂໍ້ແນະນໍາທົ່ວໄປເທົ່ານັ້ນ ແລະ DDA ອາດຈະຕ້ອງການຂໍ້ມູນເພີ່ມເຕີມ ຫຼື ການປະເມີນອີກ. ເອກະສານນີ້ເປັນຂັ້ນຕອນທໍາອິດໃນການກໍານົດການມີສິດໄດ້ຮັບ. ການມີສິດໄດ້ຮັບ DDA ຖືກກໍານົດຕາມ WAC Chapter 388-823.**